ທະນາຄານຮ່ວມພັດທະນາ

| **Position ID:** | EXC_TELL/SC |
|---|---|

# ລາຍລະອຽດຂອງໜ້າວຽກ ແລະ ເງື່ອນໄຂການສະໝັກ

**ຊື່ຕຳແໜ່ງ:** **ພະນັກງານ ບໍລິການໜ້າເຄົ້າເຕີ້ (Teller) ປະຈຳໜ່ວຍບໍລິການ**

**Position Name:** *Bank Teller*

## ❖ ໜ້າທີ່ຮັບຜິດຊອບຫຼັກ (ToR):

- ໃຫ້ບໍລິການລູກຄ້າໃນການເຮັດທຸລະກຳຕ່າງໆ ຜ່ານປ່ອງບໍລິການໜ້າເຄົ້າເຕີ ເຊັ່ນ: ການຮັບຝາກ-ຖອນ, ເບີກ-ລ້າງຄ່າໃຊ້ຈ່າຍຕ່າງໆ, ແລະ ໂອນເງິນ ທັງພາຍໃນ ແລະ ຕ່າງປະເທດ, ເປີດ-ປິດ ບັນຊີ, ບັນທຶກທຸກການກະທຳທຸລະກຳການເງິນ, ອອກໃບຮັບເງິນ, ປຶ້ມແຊັກ, ໃຫ້ບໍລິການ ຊຳລະສິນເຊື່ອ, ຊຳລະບັດ Credit, ຊຳລະຄ່າບໍລິການ ແລະ ໃຫ້ບໍລິການອື່ນໆ ທີ່ ທຄຣ ຮອງຮັບ;
- ສົ່ງເສີມການບໍລິການຂອງ ທຄຣ ໃຫ້ແກ່ລູກຄ້າ ແລະ ແນະນຳໃຫ້ເຂົາເຈົ້ານຳໃຊ້ການບໍລິການຕ່າງໆທີ່ ທຄຣ ສາມາດຕອບສະໜອງ ແລະ ລວມໄປເຖິງການໃຫ້ຄຳປຶກສາທາງດ້ານການເງິນໃຫ້ແກ່ລູກຄ້າ;
- ບຸກບືນ ແລະ ຊອກລະດົມ ຫາລູກຄ້າ ເງິນຝາກ, ເງິນກູ້ ແລະ ຜະລິດຕະພັນຕ່າງໆຂອງທະນາຄານໃນແຕ່ລະໄລຍະ ເພື່ອໃຫ້ບັນລຸຜົນ KPI ປະຈຳປີ;
- ສະຫຼຸບການເຄື່ອນໄຫວບັນຊີທຸກປະເພດ ແລະ ຮັບ-ສົ່ງ ເງິນເຂົ້າຄັງເງິນສົດ.
- ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າສາຍງານ.

## ❖ ວຸດທິການສຶກສາ (Academic Background):

- ຜູ້ທີ່ສະໝັກໃນຕຳແໜ່ງນີ້ຈະຕ້ອງຮຽນຈົບລະດັບ ປະລິນຍາຕີ ຂຶ້ນໄປໃນສາຂາວິຊາ:
  - ບັນຊີ, ການເງິນ;
  - ການທະນາຄານ ຫຼື ເສດຖະສາດ;
  - ບໍລິຫານທຸລະກິດ ແລະ ວິຊາອື່ນໆ ທີ່ກ່ຽວຂ້ອງກັບທຸລະກິດການເງິນ-ການທະນາຄານ.

## ❖ ກ່ຽວກັບຜູ້ສະໝັກ (About Applicant):

- ນັກສຶກສາຈົບໃໝ່ ຫຼື ມີປະສົບການໃນການເຮັດວຽກມາກ່ອນ;
- ສາມາດສື່ສານ, ຂຽນ, ອ່ານໄດ້ ລະດັບດີ: (ພາສາອັງກິດ ຫຼື ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງ);
- ສຳລັບຕຳແໜ່ງ ທີ່ປະຈຳຢູ່ແຂວງບໍ່ແກ້ວ ແລະ ແຂວງຫຼວງນ້ຳທາ ແມ່ນຕ້ອງສາມາດສື່ສານພາສາຈີນໄດ້;
- ສາມາດໄປປະຈຳການຢູ່ຕ່າງແຂວງ ຫຼື ຖ້າເປັນຄົນທ້ອງຖິ່ນທີ່ ທຄຣ ປະກາດຮັບຢູ່ ຍິ່ງເປັນການດີ;
- ເປັນຄົນທີ່ມີບຸກຄະລິກດີ ແລະ ຮັກໃນການເຮັດວຽກດ້ານການບໍລິການ;
- ມີຄວາມຮູ້ ຄວາມສາມາດໃນການໃຊ້ຄອມພິວເຕີ, ການນຳໃຊ້ MS Office ແລະ Excel ໃນລະດັບດີ;
- ເປັນຄົນທີ່ບໍ່ເຄີຍກໍ່ຄະດີອາຍາ ແລະ ບໍ່ເຄີຍຖືກຕັດອິດສະພາບມາກ່ອນ;
- ສາມາດເຮັດວຽກໄດ້ຫຼາກຫຼາຍ, ມີຄວາມອົດທົນ, ໃສ່ໃຈໃນລາຍລະອຽດ ແລະ ສາມາດເຮັດວຽກເປັນທີມ;
- ເປັນຄົນທີ່ສາມາດເຮັດວຽກກັບເພື່ອນຮ່ວມງານຫຼາຍຄົນໄດ້, ມີຄວາມອົດທົນສູງ, ມີຄວາມລະອຽດໃນໜ້າວຽກທີ່ໄດ້ຮັບມອບໝາຍ, ມີຄວາມຊື່ສັດ ແລະ ຍຶດໝັ້ນໃນໜ້າທີ່.